ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********************************

ທະນາຄານແຫ່ງ ສປປ ລາວ

ເລກທີ 68 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 25 DEC 2015

ສຳນັກງານ ຄຄຊ
ເລກທີ 1341
ວັນທີ
ໂທລະສັບ 021 217770

# ບົດບັນທຶກກອງປະຊຸມ

ສ່ອງແສງວຽກງານສາຍລັດປະຈຳເດືອນ ພະຈິກ ປີ 2015.

ໃນຕອນເຊົ້າ ຂອງວັນຈັນ ວັນທີ 14 ທັນວາ 2015 ເວລາ 08:00 ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ IV ທຫລ, ໄດ້ຈັດກອງປະຊຸມສ່ອງແສງວຽກງານສາຍລັດປະຈຳເດືອນ ພະຈິກ ປີ 2015 ໂດຍການເປັນປະທານຂອງ ທ່ານ ດຣ ສົມພາວ ໄຟສິດ ຜູ້ວ່າການ ທຫລ. ມີບັນດາຫົວໜ້າກົມ, ຮອງຫົວໜ້າກົມ, ຮອງຜູ້ອຳນວຍການ ທະນາຄານທຸລະກິດລັດ, ຕາງໜ້າຜູ້ອຳນວຍການຕະຫຼາດຫຼັກຊັບລາວ ເຂົ້າຮ່ວມ. (ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມໄດ້ຄັດຕິດມາພ້ອມນີ້).

ບັນດາທ່ານເຂົ້າຮ່ວມກອງປະຊຸມ ໄດ້ລາຍງານສະພາບພົ້ນເດັ່ນການຈັດຕັ້ງປະຕິບັດວຽກງານໃນກົມກອງຂອງຕົນໃນໄລຍະໜຶ່ງເດືອນຜ່ານມາ ພ້ອມນີ້, ຍັງມີຂໍ້ສະເໜີເຖິງກົມກ່ຽວຂ້ອງ.

ຜ່ານການຮັບຟັງສະພາບພົ້ນເດັ່ນ, ບັນດາຂໍ້ຄົງຄ້າງ ແລະ ຂໍ້ສະເໜີຕ່າງໆ, ປະທານກອງປະຊຸມໄດ້ຕີລາຄາສູງໃນໄລຍະໜຶ່ງເດືອນຜ່ານມາແຕ່ລະກົມກອງໄດ້ເອົາໃຈໃສ່ປະຕິບັດວຽກງານຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດເປັນຢ່າງດີດັ່ງນີ້:

1. ການຮັກສາຄວາມສະຫງົບພາຍໃນສຳນັກງານ-ອົງການ ເຫັນວ່າມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍດີ;
2. ການປະກອບສ່ວນ ຂອງທະນາຄານ ເຂົ້າໃນຂະບວນການສະເຫຼີມສະຫຼອງວັນສະຖາປະນາ ສປປ ລາວ ຄົບຮອບ 40 ປີ ເຫັນວ່າເຮັດໄດ້ດີ, ຟົດຟື້ນ ແລະ ມີຄວາມຮັບຜິດຊອບສູງ. ແຕ່ລະກົມກອງ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ຂອງໃຜລາວໃນການຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ພ້ອມທັງໄດ້ຕົບແຕ່ງສຳນັກງານຂອງຕົນໃຫ້ມີຄວາມສວຍງາມ ພ້ອມນັ້ນຝາກຄວາມຍ້ອງຍໍຊົມເຊີຍມາຍັງພະນັກງານທະນາຄານ ໃນການປະກອບສ່ວນວຽກງານດັ່ງກ່າວບໍ່ວ່າທາງກົງ ແລະ ທາງອ້ອມ;
3. ກ່ຽວກັບການໂຈະການຍ້ອງຍໍຜົນງານ 10 ປີ (2005-2015) ຈາກຂັ້ນເທິງ ແມ່ນໃຫ້ບັນດາທ່ານ ໄປອະທິບາຍ ແລະ ຊີ້ແຈງຕໍ່ອ້າຍ, ນ້ອງພະນັກງານຮັບຊາບ ເພື່ອບໍ່ໃຫ້ເປັນການຄ່ອງຄ່ອຍ ເນື່ອງຈາກວ່າບໍ່ໄປ ຕາມທິດຊີ້ນຳຂອງຂັ້ນເທິງ ຄືຍ້ອງຍໍໃຫ້ຜູ້ປະຕິບັດງານຕົວຈິງຢູ່ຂັ້ນຮາກຖານທ້ອງຖິ່ນ. ສະນັ້ນ ຈຶ່ງໄດ້ມີການຍ້ອງຍໍພາຍໃນໂດຍການຖືເອົາການປະເມີນຜົນງານປະຈຳປີ ມາເປັນການຍ້ອງຍໍບຸກຄົນ. ພ້ອມນັ້ນກໍ່ໃຫ້ເຮັດວຽກງານແນວຄິດຕໍ່ກັບພະນັກງານ ຖ້າຫາກເກີດຢູ່ບ່ອນໃດໃຫ້ບ່ອນນັ້ນເປັນຜູ້ແກ້ໄຂ ເພື່ອຮັບປະກັນ ແລະ ຮັກສາຄວາມສະຫງົບ;
4. ພວກເຮົາຍັງສາມາດສືບຕໍ່ຮັກສາສະຖຽນລະພາບທາງດ້ານເງິນຕາໄດ້ຢ່າງໜັ້ນ ທ່ຽງ.
5. ໄດ້ມີປະກົດການຫຍໍ້ທໍ້ເກີດຂຶ້ນ ແລະ ໃຫ້ບັນດາກົມກອງກ່ຽວຂ້ອງໄປປ້ອງກັນ ແລະ ແກ້ໄຂດັ່ງນີ້:

5.1 ມີປະກົດການທີ່ຄົນບໍ່ດີໄດ້ຕິດລະບົບໄອທີ ເພື່ອລັກເອົາຂໍ້ມູນລູກຄ້າທະນາຄານທີ່ຖອນເງິນຢູ່ຕູ້ ATM ເຮັດໃຫ້ເກີດມີການເສຍຫາຍທາງດ້ານຊັບສິນ ເປັນຈຳນວນຫຼາຍ;

5.2 ມີສະຖາບັນການເງິນທີ່ເກີດຂຶ້ນ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ເປັນຈຳນວນຫຼາຍ;

5.3 ບັນຫາ NPL ຍັງມີອັດຕາເພີ່ມຂຶ້ນສູງ, ໂດຍສະເພາະທະນາຄານສົ່ງເສີມກະສິກຳຍັງຈັດຕັ້ງປະຕິບັດວຽກງານສິນເຊື່ອລະຫວ່າງສຳນັກງານໃຫຍ່ ແລະ ສາຂາ ໄປໃນທາງທີ່ຜິດ; ທະນາຄານພັດທະນາລາວ ແມ່ນໃຫ້ເອົາໃຈໃສ່ເປັນເຈົ້າການຕັດສິນໃຈເດັດຂາດໃນການປະເມີນ ແລະ ວິເຄາະລູກຄ້າສິນເຊື່ອ ບໍ່ແມ່ນນຳສະເໜີຂັ້ນເທິງພິຈາລະນາຊີ້ນຳ; ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ຕ້ອງໄດ້ແກ້ໄຂເລື່ອງຖານະການເງິນ ໃຫ້ມີສະພາບຄ່ອງດີ ແລະ ໃຫ້ ທຫລ ຊ່ວຍຄິແນວໃດກໍໃຫ້ສະເໜີກົມຄຸ້ມຄອງ ທະນາຄານທຸລະກິດ;

5.4 ບັນດາທະນາຄານທຸລະກິດ ເຫັນວ່າຍັງບໍ່ທັນໄດ້ເອົາໃຈໃສ່ຄຸ້ມຄອງສາຂາຂອງຕົນເອງເທົ່າທີ່ຄວນ ເຮັດໃຫ້ເກີດປະກົດການຫຍໍ້ທໍ້ເກີດຂຶ້ນຢູ່ຂັ້ນສາຂາ ຈຶ່ງເກີດມີການປົດປ່ອຍພະນັກງານຂອງຕົນອອກຈາກການ;

5.5 ເຈົ້າໜ້າທີ່ ຂໍຂໍ້ມູນນັກສຶກສາຢູ່ ສະຖາບັນການທະນາຄານ ຄົນໜຶ່ງ (ຕິດພັນກັບຢາເສບຕິດ) ນັ້ນ, ເຫັນວ່າໃຫ້ສະຖາບັນການທະນາຄານ ໃຫ້ເອົາໃຈໃສ່ຕື່ມໃນການສຶກສາອົບຮົມຕໍ່ພະນັກງານ ໃຫ້ເປັນປະຈຳ, ຖ້າຫາກປະກົດການຫຍໍ້ທໍ້ເກີດຂຶ້ນໃນຂັ້ນຕອນໃດກໍ່ໃຫ້ເປັນໄປຕາມລະບຽບກົດໝາຍ.

- ຂໍ້ສະເໜີບັນດາທ່ານຕໍ່ກອງປະຊຸມ:

1. ການເຂົ້າ-ອອກ ຂອງພະນັກງານ ເຫັນວ່າຍັງບໍ່ທັນຄ່ອງຕົວເທົ່າທີ່ຄວນ ແມ່ນມອບໃຫ້ຫ້ອງການ ທຫລ ປະສານກັບພາກສ່ວນກ່ຽວຂ້ອງ ປຶກສາຫາລືຊອກຫາທາງອອກ ແຕ່ຕ້ອງຮັບປະກັນທາງດ້ານຄວາມປອດໄພ;
2. ໜ່ວຍງານຂໍ້ມູນຕ້ານການຟອກເງິນ ໃນກໍລະນີໄປເຂົ້າຮ່ວມກອງປະຊຸມມາແລ້ວຖ້າຫາກວຽກງານໃດ ແລະ ບັນຫາໃດທີ່ຕິດພັນກັບພາກສ່ວນໃດ ແມ່ນໃຫ້ປະສານກັນຄັກແນ່.
3. ການຊື້ຮຸ້ນຂອງບຸກຄົນຈາກຕ່າງປະເທດ (ໄທ) ເຫັນວ່າຍັງມີຂໍ້ຈຳກັດບາງດ້ານໃນການໂອນເງິນເຂົ້າມາ ສປປ ລາວ ເພື່ອຊື້ຮຸ້ນນັ້ນ ໃຫ້ ສຳນັກງານ ຄຄຊ ເບິ່ງຕາມສະພາບຕົວຈິງ ແລະ ເອົາໃຈໃສ່ຕິດຕາມ. ພ້ອມນັ້ນໃຫ້ສຳນັກງານ ຄຄຊ ປຶກສາຫາລືກັບບໍລິສັດທີ່ຈະຂາຍຮຸ້ນອອກ ເພື່ອປຶກສາຫາລືກັນຄັກແນ່ ຊອກຫາວິທີການລະດົມທຶນພາຍໃນ. ຖ້າຫາກແຫຼ່ງທຶນຫາກມາຈາກໄທເປັນສ່ວນໃຫຍ່ແລ້ວເຫັນວ່າການລະດົມທຶນແມ່ນບໍ່ປະສົບຜົນສຳເລັດ ເນື່ອງຈາກຈຸດປະສົງແມ່ນການລະດົມທຶນພາຍໃນ;
4. ລັດຖະບານລາວອອກຈຳໜ່າຍພັນທະບັດຢູ່ທີ່ປະເທດໄທນັ້ນ ເຫັນວ່າເປັນບັນຍາກາດທີ່ດີ ແລະ ບໍ່ແມ່ນເປັນການປົດລັບທາງດ້ານການເປີດເຜີຍຂໍ້ມູນຕົວເລກ ທີ່ກ່ຽວຂ້ອງ;
5. ການໂອນເງິນດ້ວຍລະບົບ RTGS ໃຫ້ກັບລູກຄ້າໂດຍກົງເລີຍນັ້ນ ແມ່ນເຫັນວ່າເຮັດໄດ້ແຕ່ສະເພາະລະຫວ່າງທະນາຄານ ເນື່ອງຈາກວ່າຕິດພັນກັບການແລກປ່ຽນເງິນຕາຕ່າງປະເທດ ໃຫ້ທະນາຄານທຸລະກິດອະທິບາຍຕໍ່ລູກຄ້າໃຫ້ເຂົ້າໃຈຕໍ່ກັບບັນຫາດັ່ງກ່າວ;
6. ການຄຸ້ມຄອງລະບົບການໃຊ້ບັດ ATM ຮ່ວມກັນໃນ ສປປ ລາວ (LAPS) ນັ້ນ ມອບໃຫ້ ກົມເຕັກໂນໂລຊີຂໍ້ມູນຂ່າວສານ ສົມທົບກັບກົມຈັດຕັ້ງແລະພະນັກງານ ເພື່ອປຶກສາຫາລືກັນທາງດ້ານການເພີ່ມພະແນກສະເພາະໃນການຄຸ້ມຄອງ ແລະ ຊອກຫາບຸກຄະລາກອນທີ່ເໝາະສົມ;
7. ໃຫ້ກົມເຕັກໂນໂລຊີ ຂໍ້ມູນຂ່າວສານ ສົມທົບກັບກົມຈັດຕັ້ງແລະພະນັກງານ ເພື່ອຊອກຫາບຸກຄະລາກອນໃນການຄຸ້ມຄອງ, ສ້ອມແປງ ແລະ ສາມາດບຳລຸງຮັກສາລະບົບ SWIFT ພ້ອມນັ້ນໃຫ້ຂຶ້ນແຜນສົ່ງພະນັກງານໄປຍົກລະດັບທາງດ້ານ IT ຈຳນວນ 3-5 ຄົນ, ເບື້ອງຕົ້ນປະສານໄປຍັງມະຫາວິທະຍາໄລ ທີ່ຢູ່ ສປ.ຈີນ;

໘. ມອບໃຫ້ຫ້ອງການ ທຫລ ກວດກາເບິ່ງຄືນຈັກປັ່ນໄຟຟ້າສຳຮອງ ໂດຍສະເພາະຢູ່ດ້ານຂ້າງກົມບໍລິການ ເພື່ອໃຫ້ຮັບປະກັນທາງດ້ານການນຳໃຊ້;

໙. ໃຫ້ບັນດາກົມເຜີຍແຜ່ຄູ່ມື ວຽກງານສະຖາບັນການເງິນ ແລະ ບັນດາພາລະບົດບາດຂອງ ທຫລ ແລະ ກົມກອງນັ້ນ ແມ່ນໃຫ້ແຕ່ລະກົມເປັນເຈົ້າການໃນການເຜີຍແຜ່ເອກະສານໃຫ້ກັບພະນັກງານຂອງຕົນ;

- ປະທານກອງປະຊຸມໄດ້ມີບາງຄຳເຫັນຕໍ່ບັນດາກົມ ເພື່ອນຳໄປຈັດຕັ້ງປະຕິບັດ:

1. ລະບຽບການເຂົ້າສູ່ຕະຫຼາດ ຂອງບັນດາສະຖາບັນການເງິນ (MARKET ENTRY) ໃຫ້ ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງສະຖາບັນການເງິນ, ສຳນັກງານ ຄດຊ ແລະ ກົມນະໂຍບາຍ ກວດກາເບິ່ງຕໍ່ກັບຜູ້ທີ່ມາລົງທຶນ ຂອງຂາຮຸ້ນເກົ່າ ແລະ ໃໝ່ ໃຫ້ຈະແຈ້ງ ເນື່ອງຈາກບັນຫານີ້ຕິດພັນກັບການຟອກເງິນ;
2. ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເຊີນບັນດາທະນາຄານທຸລະກິດມາປຶກສາຫາລືກວດກາຄືນ ການຮັກສາຄວາມປອດໄພ ໂດຍສະເພາະລະບົບ ຕູ້ ATM ເນື່ອງຈາກໄລຍະນີ້ແມ່ນເຫັນວ່າເກີດປະກົດການງັດແງະ ແລະ ລັກຂໍ້ມູນລູກຄ້າສ້າງຄວາມເສຍຫາຍຈຳນວນຫຼາຍຕໍ່ລູກຄ້າກໍຄືທະນາຄານ;
3. ກົມພົວພັນສາກົນ ປະສານສົມທົບກັບກະຊວງການເງິນ ໃນຄວາມເປັນເອກະພາບກັນ ໂດຍສະເພາະວຽກງານ CEO ແລະ OMIF ໃນການກະກຽມເປັນເຈົ້າພາບຈັດກອງປະຊຸມອາຊຽນ ຂະແໜງການເງິນ ແລະ ທະນາຄານ ຢູ່ ສປປ ລາວ ປີ 2016;
4. ກົມບໍລິການ ເຊີນບັນດາທະນາຄານທຸລະກິດທີ່ໃຊ້ລະບົບ SWIFT ຂອງ ທຫລ ມາປຶກສາຫາລືກັນໃນການເຊື່ອມຕໍ່ໃສ່ Core Banking;
5. ໃຫ້ກົມບໍລິການ ແລະ ກົມນະໂຍບາຍເງິນຕາ ປຶກສາຫາລືກ່ຽວກັບຄັງສຳຮອງເງິນຕາຕ່າງປະເທດ;
6. ໃຫ້ກົມບໍລິການ ຮ່າງໜັງສືເຖິງ ກົມພົວພັນສາກົນ ກ່ຽວກັບການເປີດບັນຊີເງິນຢອນຕິດພັນກັບ AMRO ຮ່ວມກັບ ສປ ຈີນ ເພື່ອໃຫ້ກົມພົວພັນສາກົນ ນຳເອົາບັນຫານີ້ລາຍງານໃນກອງປະຊຸມອາຊຽນ;
7. ການເຄື່ອນຍ້າຍວັດຖຸທີ່ເປັນເງິນຕາຕ່າງປະເທດທາງເຄື່ອງບິນ ເຫັນວ່າຫີບບັນຈຸປະຈຸບັນມີນ້ຳໜັກຫຼາຍເກີນໄປເນື່ອງຈາກວ່າໄລຍະນີ້ທາງການບິນລາວໄດ້ເຂັ້ມງວດ ແລະ ຈຳກັດທາງດ້ານນ້ຳໜັກ. ສະນັ້ນ, ມອບໃຫ້ ກົມບໍລິການສົມທົບ ຫ້ອງການ ທຫລ ເພື່ອຊອກຫາຫີບທີ່ເບົາ ແລະ ແຂງ ຮັບປະກັນການງັດເຈາະ;

໘. ກົມເຕັກໂນໂລຊີ ຂໍ້ມູນຂ່າວສານ ປັບປຸງລະບົບການບັນທຶກຂໍ້ມູນ ຢ່າງໜ້ອຍໃຫ້ສາມາດຮັບປະກັນໃນການບັນທຶກໄດ້ 5 ປີ;

໙. ກົມຄຸ້ມຄອງສະຖາບັນການເງິນ ສົມທົບກັບຫ້ອງການ ທຫລ ເພື່ອປະສານໄປຍັງ ໂທລະພາບ ແລະ ວິທະຍຸກະຈາຍສຽງໃນການແຈ້ງກ່ຽວກັບລະບຽບການຕ່າງໆ ໃນການຄຸ້ມຄອງສະຖາບັນການເງິນ ພ້ອມນັ້ນ ໃຫ້ສົມທົບກັບກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຊີ້ແຈງໃຫ້ເຂົ້າໃຈກໍ່ກັບບັນຫາສະຖາບັນການເງິນທີ່ ເຄື່ອນໄຫວຜິດລະບຽບ ແລະ ສະຖາບັນການເງິນທີ່ສ້າງຕັ້ງຂຶ້ນທີ່ບໍ່ໄດ້ຮັບອານຸຍາດຕາມກົດໝາຍ.

10. ຕິດພັນວຽກງານພັນທະບັດ ໃຫ້ກົມບໍລິການປະສານກັບກະຊວງການເງິນ ພ້ອມນັ້ນສະເໜີ ທ່ານຮອງຜູ້ວ່າການ ທຫລ ແລະ ທ່ານລັດຖະມົນຕີຊ່ວຍວ່າການກະຊວງການເງິນ ເປັນປະທານກອງຊຸມ ແລ້ວເຊີນບັນດາພາກສ່ວນວິສາຫະກິດຕ່າງໆເຂົ້າຮ່ວມ ເພື່ອສ້າງຄວາມໝັ້ນໃຈໃຫ້ກັບວິສາຫະກິດຕ່າງໆຕໍ່ກັບການອອກພັນທະພັນດັ່ງກ່າວ;

- ປະທານກອງປະຊຸມໄດ້ແນະນຳລວມ:

1. ທຸກພາກສ່ວນໃຫ້ແກ້ໄຂວຽກງານວິຊາສະເພາະຂອງຕົນເອງ ແລະ ໃຫ້ປະຕິບັດຕາມລະບຽບການດັ່ງກ່າວ. ໃຫ້ຮອບຄອບ ແລະ ສຳເລັດ. ໃຫ້ທະນາຄານທຸລະກິດແຈ້ງໃຫ້ລູກຄ້າຂອງຕົນຮັບຊາບໃນການປິດບັນຊີເພື່ອຮັບປະກັນການບໍລິການ;
2. ການອອຍພອນການນຳຂັ້ນເທິງ ມອບໃຫ້ຫ້ອງການ ທຫລ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອກະກຽມອອຍພອນ. ສ່ວນທະນາຄານທຸລະກິດ ແມ່ນບໍ່ໃຫ້ປະຕິບັດການອອຍພອນຄືຊຸມປີຜ່ານມາ ແລະ ສ່ວນທາງດ້ານນະໂຍບາຍແມ່ນໃຫ້ກວດກາເບິ່ງຄືນຕໍ່ກັບລະບຽບການ, ຫາກທະນາຄານໃດຫາກຂາດທຶນແມ່ນບໍ່ໃຫ້ປະຕິບັດນະໂຍບາຍທ້າຍປີຄືປີຜ່ານມາ ເນື່ອງຈາກມັນເປັນລາຍຈ່າຍເປັນຈຳນວນຫຼາຍ;
3. ເອົາໃຈໃສ່ວຽກງານປ້ອງກັນເວນຍາມ, ສ່ວນປ້າຍຄຳຂວັນກ່ຽວກັບການສ້າງຕັ້ງ ສປປ ລາວ ຄົບຮອບ 40 ປີນັ້ນແມ່ນໃຫ້ເບິ່ງອັນລວມຫາກວ່າຈະໄດ້ເອົາສິ່ງກໍ່ໃຫ້ແຈ້ງໄປຍັງທະນາຄານທຸລະກິດດັ່ງກ່າວ.

ກອງປະຊຸມໄດ້ປິດລົງໃນເວລາ 16:30 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ

ດຣ. ສົມພາວ ໄຟສິດ

ຜູ້ບັນທຶກ.,

ອາພິລົມ ວິໄລທົງ